# ທະນາຄານແຫ່ງ ສປປລາວ (ທຫລ) ເຜີຍແຜ່ການກຽມຄວາມພ້ອມໃຫ້ ທະນາຄານທຸລະກິດຈັດຕັ້ງປະຕິບັດການລາຍງານການເງິນຕາມ ມາດຕະຖານສາກົນ.



ໃນວັນທີ 27 ກໍລະກົດ 2021 ທຫລ ໄດ້ຈັດຕັ້ງການແຜີຍແຜ່ການຈັດຕັ້ງປະຕິບັດການລາຍງານການເງິນຕາມ ມາດຕະຖານສາກົນ “IFRS” ຂຶ້ນ ຢູ່ທີ່ສະຖາບັນທະນາຄານ, ນະຄອນຫຼວງວຽງຈັນ ໂດຍພາຍໃຕ້ການເປັນປະທານ ຂອງທ່ານ ນ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ ເຊິ່ງມີກົມກ່ຽວຂ້ອງຈາກ ທຫລ, ຜູ້ຕາງໜ້າຈາກທະນາຄານທຸລະກິດລັດ, ລັດຮຸ້ນສ່ວນ, ທະນາຄານເອກະຊົນ, ສາຂາຕ່າງປະເທດ ແລະ ບໍລິສັດກວດສອບພາຍນອກເຂົ້າຮ່ວມ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້ ກໍ່ເພື່ອເຜີຍແຜ່ແຈ້ງການຂອງຜູ້ວ່າການ ທຫລ ກ່ຽວກັບການຈັດຕັ້ງປະຕິບັດການລາຍງານການເງິນຕາມມາດຕະຖານສາກົນ ໃຫ້ແກ່ບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຈັດຕັ້ງປະຕິບັດການລາຍງານການເງິນຕາມມາດຕະຖານສາກົນສອດຄ່ອງກັບຄວາມເປັນຈິງ; ໃນນັ້ນ, ທຫລ ໄດ້ເນັ້ນໜັກໃຫ້ທະນາຄານທຸລະກິດກະກຽມຄວາມພ້ອມ ຂອງ IFRS ແຕ່ປີ 2021-2025 ແລະ ໃນປີ 2026 ສາມາດເລີ່ມຕົ້ນການລາຍງານການເງິນຕາມມາດຕະຖານໃຫ້ໄດ້ຢ່າງສົມບູນ; ພ້ອມນັ້ນ, ກໍ່ສ້າງບົດວິເຄາະຊ່ອງວ່າງການຈັດຕັ້ງປະຕິບັດການລາຍງານການເງິນຕາມມາດຕະຖານສາກົນ ມາຍັງ ທຫລ ພາຍໃນປີ 2021 ແລະ ສ້າງແຜນລະອຽດກ່ຽວກັບການຂ້າມຜ່ານໄປສູ່ການຈັດຕັ້ງປະຕິບັດການລາຍງານການເງິນຕາມມາດຕະຖານສາກົນແບບເຕັມຮູບແບບຂອງຕົນ ໃນຕົ້ນປີ 2022 ລວມທັງລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດຕາມແຜນຂອງຕົນເປັນປະຈຳໄຕມາດ ມາຍັງທຫລ.

ການລາຍງານການເງິນຕາມມາດຕະຖານສາກົນ International Financial Reporting Standar “IFRS” ແມ່ນເປັນມາດຕະຖານທີ່ສາກົນໃຫ້ການຍອມຮັບ ເຊິ່ງມີບົດບາດສຳຄັນໃນການໃຫ້ບັນດາຫົວໜ່ວຍທຸລະກິດມີການເຄື່ອນໄຫວມີປະສິດທິພາບ ແລະ ໂປ່ງໃສຕໍ່ສັງຄົມ. ສຳລັບ ຢູ່ ສປປ ລາວ, ກົດໝາຍວ່າດ້ວຍການບັນຊີກໍໄດ້ກຳນົດໃຫ້ວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ຕ້ອງປະຕິບັດຕາມມາດຕະຖານ IFRS ຊຶ່ງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນກໍ່ຖືເປັນວິສາຫະກິດໜຶ່ງທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ເຊິ່ງໃນປີ 2017 ກະຊວງການເງິນ ໄດ້ອອກແຈ້ງການກ່ຽວກັບການປະຕິບັດມາດຕະຖານ IFRS ໂດຍກຳນົດໃຫ້ວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະໃດທີ່ສາມາດປະຕິບັດໄດ້ໃນປີ 2017 ແມ່ນໃຫ້ປະຕິບັດໄດ້ເລີຍ ,ສ່ວນວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະທີ່ຍັງບໍ່ທັນມີຄວາມພ້ອມໃນການປະຕິບັດໃນປີ 2017ແມ່ນໃຫ້ວາງແຜນຈັດຕັ້ງປະຕິບັດໃຫ້ໄດ້ພາຍໃນປີ 2021.

ທ່ານຮອງຜູ້ວ່າການ ທຫລ ໄດ້ກ່າວວ່າ: ຜ່ານການຈັດຕັ້ງປະຕິບັດຕົວຈິງ ຍັງມີຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດ ຕົ້ນຕໍແມ່ນຄວາມຮັບຮູ້ເຂົ້າໃຈກ່ຽວກັບມາດຕະຖານ IFRS ຍັງບໍ່ທັນເລິກເຊິ່ງ ,ໂຄງລ່າງພື້ນຖານທາງດ້ານລະບົບ IT ຍັງບໍ່ທັນມີຄວາມພ້ອມ ,ນິຕິກຳຈຳນວນໜຶ່ງຍັງບໍ່ທັນສອດຄ່ອງກັນ ແລະ ອື່ນໆ ເຮັດໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນຈຳນວນໜຶ່ງ ຍັງພົບຄວາມຫຍຸ້ງຍາກ ແລະ ບໍ່ສາມາດປະຕິບັດໄດ້ຕາມກຳນົດ ເວລາດັ່ງກ່າວ .ດັ່ງນັ້ນ ,ໃນປີ 2020 ກະຊວງການເງິນ ຈຶ່ງໄດ້ອອກແຈ້ງການຂະຫຍາຍເວລາເຕີ່ມອີກ 5ປີ ຮອດປີ2025 ແລະ ໃຫ້ເລີ່ມຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນແບບເຕັມ ສ່ວນ (Full IFRSs) ນັບແຕ່ປີ 2026 ເປັນຕົ້ນໄປ, ອີງໃສ່ແຈ້ງການຂອງກະຊວງການເງິນ ດັ່ງກ່າວ ທຫລ ກໍໄດ້ມີແຈ້ງການ ກ່ຽວກັບການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ IFRS ຂອງຂະແໜງການທະນາຄານ ສະບັບເລກທີ 99/ທຫລ, ລົງວັນທີ 14 ກໍລະກົດ 2021 ທີ່ຈະໄດ້ນຳ ມາເຜີຍແຜ່ໃຫ້ບັນດາທ່ານຊາບໃນມື້ນີ້. ໃນໂອກາດຈັດກອງປະຊຸມຄັ້ງນີ້ ນອກຈາກຈະມີການເຜີຍແຜ່ແຈ້ງການດັ່ງກ່າວແລ້ວ, ເຮົາຍັງໄດ້ ຮັບການຮ່ວມມືຈາກບໍລິສັດກວດສອບພາຍນອກມາແນະນຳກ່ຽວກັບ ການວິເຄາະຊ່ອງວ່າງ, ການສ້າງແຜນຂ້າມຜ່ານ, ສິ່ງທ້າທາຍ ແລະ ປະສົບການໃນການປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ IFRS.

**# ຂ່າວ-ພາບ: ສົມອິກ ເຄນຄຳແພງ**







ໃຊ້ເງິນກີບທົ່ວທັງຊາດ ສ້າງບົດບາດຄ່າເງິນລາວ